**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ** ເລກທີ 462 /ຫສນຍ

ນະຄອນຫຼວງວຽງຈັນ, ວັນທີ 05. ພຶດສະພາ. 2021

## ແຈ້ງການ

**ຮຽນ:** - ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າ ທີ່ນັບຖື.

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ທົ່ວປະເທດ.

**ເລື່ອງ:** ທິດຊີ້ນຳກ່ຽວກັບການສືບຕໍ່ຈັດຕັ້ງປະຕິບັດ ຄຳສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19 ຮອດວັນທີ 20 ພຶດສະພາ 2021.

- ອີງຕາມດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 93/ນຍ, ລົງວັນທີ 03 ມີນາ 2017;
- ອີງຕາມຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດ COVID-19;
- ອີງຕາມຄຳສັ່ງແນະນຳ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 87/ຄລສພ, ລົງວັນທີ 25 ເມສາ 2021 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຂອງຄະນະພັກແຕ່ລະຂັ້ນ ໃນການສືບຕໍ່ສະກັດກັ້ນ, ປ້ອງກັນ, ຄວບຄຸມ ແລະ ແກ້ໄຂພະຍາດ COVID-19;
- ອີງຕາມ ແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 11/ຫສພ, ລົງວັນທີ 04 ພຶດສະພາ 2021;
- ອີງຕາມການປະເມີນ ແລະ ລາຍງານຂອງຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄັ້ງວັນທີ 04 ພຶດສະພາ 2021;
- ອີງຕາມຈິດໃຈຊີ້ນຳຂອງກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຮ່ວມກັບຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນວັນທີ 04 ພຶດສະພາ 2021.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງ ມາຍັງທ່ານຊາບ ດັ່ງນີ້: ຜ່ານການຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການຂອງຂະແໜງການ, ອົງການກ່ຽວຂ້ອງ ແລະ ຄຳແນະນຳຂອງຄະນະສະເພາະກິດ ແຕ່ລະຂັ້ນ ວາງອອກ ເຫັນວ່າການຈັດຕັ້ງທຸກພາກສ່ວນ ທຸກຂັ້ນ ລວມທັງຂອງພາກລັດ, ພາກທຸລະກິດ ແລະ ສັງຄົມ ລ້ວນແຕ່ໄດ້ປະຕິບັດໜ້າທີ່ ດ້ວຍຄວາມຮັບຜິດຊອບສູງ ແລະ ບໍ່ຮູ້ອິດຮູ້ເມື່ອຍ, ໃນນີ້ ລວມທັງການຊີ້ນຳບັນຊາ ຂອງອົງການປົກ

ຄອງ, ຄະນະສະເພາະກິດທຸກຂັ້ນ, ການປະຕິບັດໜ້າທີ່ວິຊາສະເພາະ ຂອງກໍາລັງປະກອບອາວຸດ ແລະ ພະນັກງານແພດໝໍ ທຸກຂັ້ນ ເຮັດໃຫ້ສາມາດຄວບຄຸມການແຜ່ລະບາດ ໄດ້ໃນລະດັບໜຶ່ງ. ແຕ່ອີງຕາມການປະເມີນຂອງຄະນະສະເພາະກິດ ແລະ ອົງການອະນາໄມໂລກ, ເຖິງວ່າຈໍານວນຜູ້ຕິດເຊື້ອ ມີທ່າອ່ຽງຫຼຸດລົງ, ແຕ່ຢູ່ນະຄອນຫຼວງວຽງຈັນ ແລະ ບາງທ້ອງຖິ່ນ ແມ່ນຍັງມີຜູ້ຕິດເຊື້ອຫຼາຍຢູ່, ສິ່ງທີ່ເປັນຄວາມສ່ຽງກວ່ານັ້ນ ບຸກຄົນທີ່ໄດ້ກວດພົບວ່າມີເຊື້ອພະຍາດ ແຕ່ບໍ່ທັນມາສະເໜີຕົວ ແລະ ປິ່ນປົວເທື່ອ. ສະນັ້ນ, ລັດຖະບານ ຈຶ່ງຕົກລົງ ແລະ ມີທິດຊີ້ນໍາ ດັ່ງນີ້:

1. ສືບຕໍ່ປະຕິບັດມາດຕະການຕ່າງໆ ທີ່ລະບຸໃນ ຄໍາສັ່ງ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021, ແຈ້ງການຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 406/ຫສນຍ, ລົງວັນທີ 26 ເມສາ 2021 ແລະ ຄໍາແນະນໍາຂອງຄະນະສະເພາະກິດຂັ້ນສູນກາງ ອອກໄປຕື່ມອີກ 15 ວັນ ເລີ່ມຕັ້ງແຕ່ເວລາ 00:00 ໂມງ ຂອງວັນທີ 06 ຫາ ເວລາ 24:00 ໂມງ ຂອງວັນທີ 20 ພຶດສະພາ 2021. ສໍາລັບທ້ອງຖິ່ນຕ່າງໆ ແມ່ນໃຫ້ອີງຕາມສະພາບຕົວຈິງຂອງຕົນ ເພື່ອກໍານົດມາດຕະການຕ່າງໆ ທີ່ແທດເໝາະ.

2. ໃຫ້ຄະນະສະເພາະກິດ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ສືບຕໍ່ປະຕິບັດຕາມການມອບໝາຍຄວາມຮັບຜິດຊອບ ທີ່ໄດ້ກໍານົດໄວ້ໃນ ຄໍາສັ່ງເລກທີ 15/ນຍ ແລະ ແຈ້ງການເລກທີ 406/ຫສນຍ. ພ້ອມກັນນີ້ ກໍໃຫ້ເອົາໃຈໃສ່ຕື່ມບາງວຽກຈຸດສຸມ ດັ່ງນີ້:

1) ກະຊວງສາທາລະນະສຸກ:

- ສືບຕໍ່ເລັ່ງລັດຊອກຫາຜູ້ຕິດເຊື້ອ, ຜູ້ສໍາຜັດໃກ້ຊິດຜູ້ຕິດເຊື້ອ ແລະ ຜູ້ທີ່ມີຄວາມສ່ຽງ ເພື່ອມາກວດວິເຄາະຫາເຊື້ອໃຫ້ໝົດ, ສຸມໃສ່ປິ່ນປົວຜູ້ຕິດເຊື້ອໃຫ້ຫາຍດີເປັນປົກກະຕິ ໂດຍໄວ;
- ໃຫ້ຮີບຮ້ອນນໍາເອົາຜູ້ທີ່ໄດ້ພົບເຫັນວ່າຕິດເຊື້ອ ທີ່ຍັງບໍ່ທັນມາສະເໜີຕົວ ຫຼື ຍັງຫຼົບລີ້ ໃຫ້ມາປິ່ນປົວ ຢູ່ໂຮງໝໍ ຕາມການກໍານົດຂອງແພດ ໂດຍໄວ;
- ສືບຕໍ່ສັກວັກຊີນກັນພະຍາດໃຫ້ກຸ່ມເປົ້າໝາຍ ແລະ ປະຊາຊົນທົ່ວໄປ ໃຫ້ໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້, ພ້ອມທັງຈັດຊື້ວັກຊີນ ໃຫ້ໄດ້ຕາມແຜນການ.

2) ຄະນະສະເພາະກິດ:

- ສົມທົບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງສືບຕໍ່ປັບປຸງສະຖານ ທີ່ຈໍາກັດບໍລິເວນ, ໂຮງໝໍພາກສະໜາມ ໃຫ້ໄດ້ມາດຕະຖານດີຂຶ້ນກວ່າເກົ່າ ຮັບປະກັນ ບໍ່ໃຫ້ມີການແຜ່ເຊື້ອຢູ່ສະຖານທີ່ດັ່ງກ່າວ;
- ໃຫ້ຄະນະສະເພາະກິດ ສືບຕໍ່ຮ່ວມມືກັບວິຊາການແພດ ປະເທດເພື່ອນມິດ ເພື່ອຄວບຄຸມ ແລະ ແກ້ໄຂການລະບາດ ໃຫ້ໄດ້ ໂດຍໄວ;
- ສົມທົບກັບຂະແໜງກ່ຽວຂ້ອງ ແລະ ທ້ອງຖິ່ນ ສືບຕໍ່ໂຄສະນາເຜີຍແຜ່ ເຖິງຜົນຮ້າຍພະຍາດ COVID-19, ມາດຕະການປ້ອງກັນການຕິດເຊື້ອ ແລະ ແຜ່ເຊື້ອ ໃຫ້ສັງຄົມຮັບຊາບ ຢ່າງທົ່ວເຖິງ ແລະ ເປັນປົກກະຕິ. ພ້ອມທັງຕິດຕາມ ກວດກາ ການປະຕິບັດມາດຕະການຕ່າງໆ ທີ່ວາງອອກໃຫ້ມີປະສິດທິຜົນ;

- ອຳນວຍຄວາມສະດວກໃຫ້ແກ່ການຈໍລະຈອນສິນຄ້າ-ການດຳເນີນກິດຈະການສຳຄັນຕ່າງໆ ຂອງລັດຖະບານ, ການທຳມາຫາກິນ ແລະ ການຜະລິດກະສິກຳຂອງປະຊາຊົນ ເພື່ອສະໜອງສະບຽງອາຫານ ໃຫ້ສັງຄົມພຽງພໍ ໃນແຕ່ລະວັນ;
- ປັບປຸງເນື້ອໃນຖະແຫຼງຂ່າວປະຈຳວັນໃຫ້ຫຼາກຫຼາຍ, ກະທັດຮັດ ແລະ ເຂົ້າໃຈງ່າຍ.

3. ໃຫ້ຄະນະສະເພາະກິດ ແຕ່ລະຂັ້ນ ສືບຕໍ່ຕິດຕາມ, ປະເມີນສະພາບການເປັນແຕ່ລະໄລຍະ, ຖ້າຢູ່ທ້ອງຖິ່ນໃດ ສະພາບການດີຂຶ້ນ ກໍ່ໃຫ້ທ້ອງຖິ່ນນັ້ນ ພິຈາລະນາ ແລະ ອອກມາດຕະການຜ່ອນຄາຍ ຕາມຄວາມເໝາະສົມ, ພ້ອມທັງ ເຜີຍແຜ່ໃຫ້ສັງຄົມ ໄດ້ຮັບຊາບ ເພື່ອຈັດຕັ້ງປະຕິບັດ ຢ່າງເປັນເຈົ້າການ. ແຕ່ກົງກັນຂ້າມທ້ອງຖິ່ນໃດ ຫາກຍັງມີການລະບາດ ເພີ່ມຂຶ້ນ ກໍໃຫ້ນຳໃຊ້ມາດຕະການເຂັ້ມງວດຕື່ມອີກ.

4. ໃຫ້ຄະນະສະເພາະກິດ ແຕ່ລະຂັ້ນ ສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ລະດົມ ທຶນ ແລະ ຮັບເອົາການຊ່ວຍເຫຼືອ ຈາກທຸກພາກສ່ວນໃນສັງຄົມ ເພື່ອນຳໃຊ້ເຂົ້າໃນການ ຈັດຕັ້ງປະຕິບັດວຽກງານປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດ COVID-19.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

**ຄຳເຈນ ວົງໂພສີ**

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກລັດຖະມົນຕີ | 04 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ອົງການແນວລາວສ້າງຊາດ | 01 ສະບັບ |
| - ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ |
| - ຫ້ອງວ່າການສູນກາງພັກ | 01 ສະບັບ |
| - ຄະນະຈັດຕັ້ງສູນກາງພັກ | 01 ສະບັບ |
| - ຄະນະໂຄສະນາອົບຮົມສູນກາງພັກ | 01 ສະບັບ |
| - ຄະນະພົວພັນຕ່າງປະເທດສູນກາງພັກ | 01 ສະບັບ |
| - ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | 01 ສະບັບ |
| - ສູນກາງສະຫະພັນແມ່ຍິງລາວ | 01 ສະບັບ |
| - ສູນກາງສະຫະພັນກຳມະບານລາວ | 01 ສະບັບ |
| - ຄະນະ ຫສນຍ, ທ່ານລະ | 01 ສະບັບ |
| - ກົມກ່ຽວຂ້ອງຂອງ ຫສນຍ, ບ່ອນລະ | 01 ສະບັບ |
| - ສຳເນົາ | 01 ສະບັບ |